ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 2470 /ອຄ.ກອທ

ນະຄອນຫຼວງວຽງຈັນ, ລົງວັນທີ 11 DEC 2015

# ຂໍ້ຕົກລົງ
# ວ່າດ້ວຍກອງທຶນໝູນວຽນທາດໂປຕາດຊຽມຟຣູອໍໄຣ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 42/ນຍ, ລົງວັນທີ 20/05/1995 ແນ່ໃສ່ຄຸ້ມຄອງການປະສົມໄອໂອດິນໃສ່ເກືອ ເພື່ອປ້ອງກັນສຸຂະພາບ ຂອງປະຊາຊົນບໍ່ໃຫ້ເກີດພະຍາດຂາດທາດໄອໂອດິນ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ອຸດສາຫະກຳ ແລະ ການຄ້າ.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າອອກຂໍ້ຕົກລົງ:**

## ຫມວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງກອງທຶນໝູນວຽນທາດໂປຕາດຊຽມຟຣູອໍໄຣ ເພື່ອໃຫ້ມີກອງທຶນໃນການຈັດຊື້ທາດໂປຕາດຊຽມຟຣູອໍໄຣ ໃຫ້ພຽງພໍຕາມຄວາມຕ້ອງການຂອງຜູ້ຜະລິດເກືອ ໃນຂອບເຂດທົ່ວປະເທດ ແນ່ໃສ່ເຮັດໃຫ້ໃຫ້ປະຊາຊົນໄດ້ຊົມໃຊ້ເກືອໄອໂອດິນປະສົມຟຣູອໍໄຣທີ່ມີຄຸນນະພາບດີ ປະກອບສ່ວນແກ່ການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນລາວໃຫ້ດີຂຶ້ນເປັນກ້າວໆ.

### ມາດຕາ 2 ກອງທຶນໝູນວຽນທາດໂປຕາດຊຽມຟຣູອໍໄຣ

ກອງທຶນໝູນວຽນທາດໂປຕາດຊຽມຟຣູອໍໄຣ ປະກອບມີທາດໂປຕາດຊຽມຟຣູອໍໄຣ ແລະ ເງິນ ຊຶ່ງຕໍ່ໄປນີ້ເອີ້ນຫຍໍ້ວ່າ: **ກທຟ** ແມ່ນການສະສົມທຶນທີ່ໄດ້ມາຈາກການຊ່ວຍເຫຼືອຂອງອົງການສາກົນ, ຈາກງົບປະມານຂອງລັດ ແລະ ແຫຼ່ງທຶນອື່ນໆ ໂດຍມີຄະນະກຳມະການຄຸ້ມຄອງກອງທຶນໝູນວຽນທາດໂປຕາດຊຽມຟຣູອໍໄຣ ເປັນຜູ້ບໍລິຫານຈັດການ

### ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ອົງການສາກົນ** ໝາຍເຖິງ ອົງການຊ່ວຍເຫຼືອຈາກຕ່າງປະເທດໃນການສະໜອງທາດໂປຕາດຊຽມຟູຣອໍໄຣ ຫຼື ທຶນແກ່ການຊື້ທາດໂປຕາດຊຽມຟຣູອໍໄຣ;
2. **ທາດໂປຕາດຊຽມຟຣູອໍໄຣ** ໝາຍເຖິງ ທາດທີ່ມີຄຸນສົມບັດໃນການຮັກສາແຂ້ວ ແລະ ປ້ອງກັນພະຍາດໃນຜົ້ງປາກ, ຊຽນຫຍໍ້ເປັນພາສາອັງກິດຄື: KF;
3. **ການເບີກຈ່າຍກ່ອນ** ໝາຍເຖິງ ການອະນຸຍາດໃຫ້ຕິດໜີ້ໄປກ່ອນ 1 ຄັ້ງ, ແລ້ວກ່ອນຈະເບີກຈ່າຍຄັ້ງຕໍ່ໄປຕ້ອງໄດ້ຊໍາລະໜີ້ທີ່ໄດ້ເບີກຈ່າຍຄັ້ງກ່ອນນັ້ນ.

### ມາດຕາ 4 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ນໍາໃຊ້ໃນການສ້າງຕັ້ງ ແລະ ຄຸ້ມຄອງກອງທຶນທາດໂປຕາດຊຽມຟຣູອໍໄຣ ໃນ ສປປ ລາວ.

## ໝວດທີ 2

## ການສ້າງຕັ້ງ ກທຟ

### ມາດຕາ 5 ການສ້າງ ກທຟ

ການສ້າງຕັ້ງ **ກທຟ** ແມ່ນເພື່ອຮັບປະກັນການຈັດຊື້ ແລະ ສະໜອງທາດໂປຕາດຊຽມຟຣູອໍໄຣ ໃຫ້ແກ່ການຜະລິດເກືອໄອໂອດີນປະສົມທາດໂປຕາດຊຽມຟຣູອໍໄຣ ຢູ່ໂຮງງານຜະລິດເກືອ ໃນຂອບເຂດທົ່ວປະເທດໃຫ້ພຽງພໍ ແລະ ມີຄວາມຍືນຍົງ.

### ມາດຕາ 6 ແຫຼ່ງທຶນເບື້ອງຕົ້ນຂອງກອງທຶນ

ແຫຼ່ງທຶນເບື້ອງຕົ້ນຂອງ **ກທຟ** ແມ່ນໄດ້ມາຈາກການຮ່ວມມືຂອງລັດຖະບານລາວ ແລະ ອົງການຊ່ວຍເຫຼືອດ້ານທັນຕະກໍາສາກົນ (Aide Odontogilogique Internationale-AOI) ທີ່ມອບທາດໂປຕາດຊຽມຟຣູອໍໄຣ ໃຫ້ເພື່ອປະກອບເປັນທຶນເບື້ອງຕົ້ນຂອງກອງທຶນໝູນວຽນ, ຊຶ່ງ AOI ຈະມອບໃຫ້ໃນໄລຍະ 3 ປີ ເບື້ອງຕົ້ນຂອງການສ້າງຕັ້ງ **ກທຟ**.

### ມາດຕາ 7 ແຫຼ່ງທຶນໝູນວຽນ

ແຫຼ່ງທຶນໝູນວຽນຂອງ **ກທຟ** ແມ່ນໄດ້ມາຈາກການຂາຍທາດໂປຕາດຊຽມຟຣູອໍໄຣ ໃຫ້ຜູ້ຜະລິດເກືອແລ້ວນໍາເອົາເງິນ ຈາກການຂາຍເຂົ້າກອງທຶນ ເພື່ອໝູນວຽນຈັດຊື້ທາດໂປຕາດຊຽມຟຣູອໍໄຣສະໜອງໃຫ້ຜູ້ຜະລິດເກືອຕໍ່ໄປ.

# ໝວດທີ 3
## ການຄຸ້ມຄອງ ແລະ ການນຳໃຊ້ ກທຟ

**ມາດຕາ 8 ການຄຸ້ມຄອງ ກທຟ**

ການຄຸ້ມຄອງ ກທຟ ແມ່ນສ້າງຕັ້ງຄະນະກຳມະການຄຸ້ມຄອງ ກທຟ ເພື່ອຮັບຜິດຊອບດ້ານການຈັດຊື້, ການເກັບຮັກສາ, ການເບີກຈ່າຍທາດໂປຕາດຊຽມຟຣູອໍໄຣ ລວມທັງຄຸ້ມຄອງລາຍຮັບ - ລາຍຈ່າຍຂອງກອງທຶນ ແລະ ອື່ນໆ, ການນຳໃຊ້ທາດໂປຕາດຊຽມຟຣູອໍໄຣ ຕ້ອງນຳໃຊ້ໃຫ້ຖືກຕ້ອງຕາມແຜນປະຈຳປີ ຊຶ່ງຜູ້ຜະລິດເກືອຕ້ອງສ້າງແຜນຄວາມຕ້ອງການປະຈຳປີຂອງຕົນ.

**ມາດຕາ 9 ການຈັດຊື້ທາດໂປຕາດຊຽມຟຣູອໍໄຣ**

ການຈັດຊື້ທາດໂປຕາດຊຽມຟຣູອໍໄຣ ແມ່ນມອບໃຫ້ກຸ່ມຜູ້ຜະລິດເກືອເປັນຜູ້ສ້າງເອກະສານສັ່ງຊື້ທາດໂປຕາດຊຽມຟຣູອໍໄຣ ຕາມຄວາມຕ້ອງການຂອງໂຮງງານຜະລິດເກືອໃນແຕ່ລະຄັ້ງ ພ້ອມທັງຊອກຫາຜູ້ສະໜອງທີ່ມີເງື່ອນໄຂ ໂດຍມີຂໍ້ມູນສົມທຽບທາງດ້ານຄຸນນະພາບ, ລາຄາ ແລະ ເງື່ອນໄຂການສະໜອງຕ່າງໆ ແລ້ວນຳສະເໜີຄະນະກຳມະການຄຸ້ມຄອງ **ກທຟ** ເພື່ອພິຈາລະນາ.

**ມາດຕາ 10 ການເກັບຮັກສາ**

ການເກັບຮັກສາທາດໂປຕາດຊຽມຟຣູອໍໄຣ ແມ່ນມອບໃຫ້ກຸ່ມຜູ້ຜະລິດເກືອເປັນຜູ້ເກັບຮັກສາ ແລະ ຄຸ້ມຄອງບໍ່ໃຫ້ຕົກເຮ່ຍເສັຍຫາຍ ແລະ ເບີກຈ່າຍຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

ສະຖານທີ່ເກັບຮັກສາ ຕ້ອງມີເງື່ອນໄຂຖືກຕ້ອງເໝາະສົມ, ບໍ່ໃຫ້ຖືກແສງແດດ, ຖືກນ້ຳ ແລະ ສິ່ງທີ່ເຮັດໃຫ້ເຊື່ອມຄຸນນະພາບ.

**ມາດຕາ 11 ການເບີກຈ່າຍ**

ການເບີກຈ່າຍທາດໂປຕາດຊຽມຟຣູອໍໄຣ ຕ້ອງປະຕິບັດຕາມຂັ້ນຕອນ ແລະ ເງື່ອນໄຂ ດັ່ງລຸ່ມນີ້:

1. ການສະເໜີຂໍເບີກຈ່າຍທາດໂປຕາດຊຽມຟຣູອໍໄຣ ຜູ້ຜະລິດເກືອ ປະກອບຄຳຮ້ອງສະເໜີເຖິງປະທານກຸ່ມຜູ້ຜະລິດເກືອ ເພື່ອສັງລວມ ແລ້ວນຳສະເໜີຄະນະກຳມະການຄຸ້ມຄອງ ກທຟ ພິຈາລະນາ.

ເອກະສານປະກອບສະເໜີເບີກຈ່າຍມີດັ່ງນີ້:

- ໜັງສືສະເໜີຂໍເບີກຈ່າຍຕ້ອງກຳນົດແຈ້ງຈຳນວນຂໍເບີກຈ່າຍ;
- ບົດລາຍງານການຊົມໃຊ້ທາດໂປຕາດຊຽມຟຣູອໍໄຣ;
- ບົດສະຫລຸບການຜະລິດເກືອໄອໂອດີນຟຣູອໍໄຣ ປະຈຳແຕ່ລະເດືອນ;
- ໃບຢັ້ງຢືນການຊຳລະເງິນຕິດໜີ້ການເບີກຈ່າຍກ່ອນ ສຳລັບທາດໂປຕາດຊຽມຟຣູອໍໄຣ;

2. ພາຍຫຼັງຄະນະກຳມະການຄຸ້ມຄອງ ກທຟ ໄດ້ຮັບໜັງສືສະເໜີຂໍເບີກຈ່າຍຈາກປະທານກຸ່ມຜູ້ຜະລິດເກືອພ້ອມດ້ວຍເອກະສານທີ່ກຳນົດໃນຂໍ້ 1 ຂອງມາດຕານີ້, ຄະນະກຳມະການຄຸ້ມຄອງ **ກທຟ** ຕ້ອງພິຈາລະນາຕົກລົງແລ້ວມອບໃຫ້ກຸ່ມ ຜູ້ຜະລິດເກືອເປັນຜູ້ແຈກຢາຍຕາມການຕົກລົງຂອງຄະນະກຳມະການ.

3. ພາຍຫຼັງໄດ້ຮັບທາດໂປຕາດຊຽມຟຣູອໍໄຣແລ້ວ ຜູ່ຜະລິດເກືອຕ້ອງຊຳລະເງິນໃຫ້ຄະນະກຳມະການ ຄຸ້ມຄອງ ກທຟ ຕາມລາຄາທີ່ຄະນະກຳມະການໄດ້ກຳນົດໃຫ້, ການຊຳລະເງິນໃຫ້ໂອນເຂົ້າບັນຊີຂອງກອງທຶນ ທີ່ເປີດໄວ້ຢູ່ ທະນາຄານ ຫຼື ສະຖາບັນການເງິນ ຢູ່ ສປປ ລາວ.

ທຸກໆທ້າຍເດືອນ ກຸ່ມຜູ່ຜະລິດເກືອຕ້ອງສະຫຼຸບລາຍງານຈຳນວນເບີກຈ່າຍ ແລະ ຈຳນວນຄ້າງສາງທາດໂປຕາດຊຽມຟຣູອໍໄຣ ພ້ອມດ້ວຍລາຍຮັບຈາກການຂາຍທາດໂປຕາດຊຽມຟຣູອໍໄຣ ໃຫ້ກອງເລຂາຂອງຄະນະກຳມະການ ກທຟ ເພື່ອລາຍງານຕໍ່ປະທານຄະນະກຳມະການ **ກທຟ**.

**ມາດຕາ 12 ການຄຸ້ມຄອງເງິນ ກທຟ**

ຄະນະກຳມະການຄຸ້ມຄອງ ກທຟ ຕ້ອງເປີດບັນຊີເງິນຝາກຢູ່ທະນາຄານ ຫຼື ສະຖາບັນການເງິນຢູ່ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ, ບັນຊີເງິນຝາກຕ້ອງເປັນ 2 ສະກຸນເງິນຄື: ສະກຸນເງິນກີບ ແລະ ສະກຸນເງິນໂດລາ ໂດຍເປີດເປັນສອງລາຍເຊັນຮ່ວມ, ຜູ່ທີ່ລົງລາຍເຊັນແມ່ນໄດ້ຮັບການຕົກລົງເຫັນດີຂອງຄະນະກຳມະການໂດຍມີໜັງສືຕົກລົງມອບສິດເປັນລາຍລັກອັກສອນ.

ປື້ມບັນຊີເງິນຝາກ ແລະ ປື້ມແຊັກຖອນເງິນ ແມ່ນມອບໃຫ້ກຸ່ມຜູ່ຜະລິດເກືອເປັນຜູ່ເກັບຮັກສາ, ການຖອນເງິນແຕ່ລະຄັ້ງໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້. ການເບີກຖອນເງິນ ແລະ ການນຳໃຊ້ເງິນ ກທຟ ແຕ່ລະຄັ້ງກຸ່ມຜະລິດເກືອ ມີສິດຮັບຮູ້ໄດ້.

**ມາດຕາ 13 ການໂອນ ຫລື ຖອນເງິນ ກທຟ**

ການໂອນ ຫຼື ການຖອນເງິນແຕ່ລະຄັ້ງແມ່ນກຸ່ມຜູ່ຜະລິດເກືອເປັນຜູ່ສະເໜີ ໂດຍສະເໜີຜ່ານກອງເລຂາຄະນະກຳມະການຄຸ້ມຄອງ ກທຟ ຊຶ່ງກອງເລຂາເປັນຜູ່ກວດກາຄວາມຖືກຕ້ອງຂອງເອກະສານ ແລ້ວນຳສະເໜີຕໍ່ຄະນະກຳມະການ ຄຸ້ມຄອງ ກທຟ ເພື່ອພິຈາລະນາອະນຸ ມັດ.

ການໂອນ ຫຼື ການຖອນເງິນແຕ່ລະຄັ້ງຕ້ອງໄດ້ຮັບການເຊັນອະນຸມັດຢ່າງເປັນທາງການຈາກຄະນະກຳມະການຄຸ້ມຄອງ **ກທຟ** ແລະ ມີແຕ່ຄະນະກຳມະການຄຸ້ມຄອງ **ກທຟ** ເທົ່ານັ້ນມີສິດໃນການສັ່ງໂອນ ຫຼື ຖອນເງິນຂອງ **ກທຟ**.

**ມາດຕາ 14 ການຊຳລະເງິນສັ່ງຊື້ທາດໂປຕາດຊຽມຟຣູອໍໄຣ**

ການຊຳລະເງິນການສັ່ງຊື້ທາດໂປຕາດຊຽມຟຣູອໍໄຣ ຈາກຕ່າງປະເທດ ຕ້ອງໂອນຜ່ານລະບົບທະນາຄານ ຫລື ສະຖາບັນການເງິນຢູ່ໃນ ສປປ ລາວ.

## ໝວດທີ 4
## ຄະນະກຳມະການຄຸ້ມຄອງ ກທຟ

**ມາດຕາ 15 ຄະນະກຳມະການຄຸ້ມຄອງ ກທຟ**

ຄະນະກຳມະການຄຸ້ມຄອງ ກທຟ ແມ່ນຄະນະກຳມະການທີ່ບໍ່ປະຈຳການຖືກແຕ່ງຕັ້ງໂດຍ ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ເປັນໜ່ວຍງານທີ່ຮັບຜິດຊອບໂດຍກົງຕໍ່ການຄຸ້ມຄອງ ກທຟ ແລະ ມີກອງເລຂາເປັນເສນາທິການໃຫ້ແກ່ຄະນະກຳມະການດັ່ງກ່າວ.

**ມາດຕາ 16 ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງຄະນະກຳມະການຄຸ້ມຄອງ ກທຟ**

ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງຄະນະກຳມະການຄຸ້ມຄອງ ກທຟ ປະກອບມີຄື :

1. ຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນປະທານ;
2. ຮອງຫົວໜ້າກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ ເປັນຮອງປະທານ;
3. ຮອງຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
4. ຮອງຫົວໜ້າກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເປັນຄະນະ;
5. ປະທານກຸ່ມຜູ່ຜະລິດເກືອລາວ ເປັນຄະນະ.

**ມາດຕາ 17 ໂຄງປະກອບຂອງກອງເລຂາຄະນະກຳມະການຄຸ້ມຄອງ ກທຟ**

ໂຄງປະກອບຂອງກອງເລຂາຄະນະກຳມະການຄຸ້ມຄອງ ກທຟ ປະກອບມີຄື :

1. ຫົວໜ້າພະແນກ, ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຫົວໜ້າກອງເລຂາ;
2. ຫົວໜ້າ/ຮອງພະແນກ, ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ ເປັນຮອງກອງເລຂາ;
3. ຕາງໜ້າກຸ່ມຜະລິດເກືອ ເປັນຮອງກອງເລຂາ;
4. ພະນັກງານວິຊາການຂອງສູນວິໄຈອາຫານ ແລະ ຢາ, ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ ເປັນຄະນະ;
5. ພະນັກງານວິຊາການຂອງກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;

**ມາດຕາ 18 ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງ ກທຟ.**

ຄະນະກຳມະການຄຸ້ມຄອງ **ກທຟ** ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງລຸ່ມນີ້:

1. ຄຸ້ມຄອງ ແລະ ຕິດຕາມການນຳໃຊ້ **ກທຟ** ເພື່ອນຳໃຊ້ຢ່າງມີປະສິດທິຜົນ ແລະ ຍືນຍົງ;
2. ພິຈາລະນາອະນຸມັດການໂອນ ຫຼື ຖອນເງິນ ຂອງ ກທຟ ແລະ ອະນຸມັດເບີກຈ່າຍທາດໄປຕາດຊຽມຟຣູອໍໄຣໃຫ້ໂຮງງານຜະລິດເກືອຕາມແຜນທີ່ໄດ້ຮັບຮອງ;

3. ຕິດຕາມ ແລະ ກວດກາລາຍຮັບຈາກການຂາຍທາດໂປຕາດຊຽມຟຣູອໍໄຣ, ການເບີກຈ່າຍ ແລະ ຈຳນວນຄ້າງສາງທາດໂປຕາດຊຽມຟຣູອໍໄຣ, ກວດກາຄຸນນະພາບຂອງທາດໂປຕາດຊຽມຟຣູອໍໄຣ ແລະ ຄຸນນະພາບຂອງເກືອໄອໂອດີນ ປະສົມໂປຕາດຊຽມຟຣູອໍໄຣ;
4. ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ ເພື່ອກວດກາ, ຕິດຕາມ, ຊຸກຍູ້ສົ່ງເສີມການຜະລິດເກືອໄອໂອດີນປະສົມໂປຕາດຊຽມຟຣູອໍໄຣ ໃນຂອບເຂດທົ່ວປະເທດ;
5. ຊີ້ນຳ, ກວດກາ ແລະ ຕົກລົງບັນຫາກ່ຽວກັບການຄຸ້ມຄອງ ແລະ ການບໍລິຫານຈັດການ **ກທຟ**;
6. ພົວພັນປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຂອງ ກທຟ;
7. ຈັດກອງປະຊຸມທົບທວນຄືນການຈັດຕັ້ງປະຕິບັດ **ກທຟ** ປະຈຳປີ ຫຼື ຕາມກໍລະນີມີຄວາມຈຳເປັນ;
8. ສະຫຼຸບລາຍງານ ປະຈຳ 06 ເດືອນ ແລະ ປີ ຂອງການເຄື່ອນໄຫວຂອງ **ກທຟ** ໃຫ້ລັດຖະມົນຕີວ່າການກະຊວງ ອຄ ຊາບ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງກອງເລຂາ**

ກອງເລຂາຄະນະກຳມະການຄຸ້ມຄອງ ກທຟ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ຄະນະກຳມະການຄຸ້ມຄອງ ກທຟ ເປັນຕົ້ນເກັບກຳ ແລະ ສັງລວມເອກະສານເຂົ້າ-ອອກ, ຈັດກອງປະຊຸມ, ບົດລາຍງານປະຈຳເດືອນ, ງວດ, ປີ ແລະ ອື່ນໆ ຕາມການມອບໝາຍຂອງຄະນະກຳມະການ ກອງທຶນ;
2. ຕິດຕາມການເກັບຮັກສາ, ການເບີກຈ່າຍ ແລະ ການຊຳລະເງິນຄ່າທາດໂປຕາດຊຽມຟຣູອໍໄຣ ເພື່ອສະຫຼຸບລາຍງານໃຫ້ຄະນະກຳມະການຄຸ້ມຄອງ **ກທຟ**;
3. ປະສານສົມທົບກັບກຸ່ມຜູ່ຜະລິດເກືອຕິດຕາມຂໍ້ມູນ ການກວດກາຄຸນນະພາບເກືອໄອໂອດີນປະສົມທາດໂປຕາດຊຽມຟຣູອໍໄຣ ຂອງບັນດາໂຮງງານຜະລິດເກືອ ເພື່ອລາຍງານຄະນະກຳມະການຄຸ້ມຄອງ **ກທຟ;**
4. ລົງກວດກາຕິດຕາມ ແລະ ຊຸກຍູ້ ໂຮງງານເກືອ ເພື່ອໃຫ້ມີການປະສົມທາດໄອໂອດີນ ແລະ ທາດໂປຕາດຊຽມຟຣູອໍໄຣ;
5. ສະຫລຸບລາຍງານດ້ານການເງິນ, ວາງແຜນການຈັດຊື້ທາດໂປຕາດຊຽມຟຣູອໍໄຣ ແລະ ສະພາບການຜະລິດເກືອໃຫ້ ຄະນະກຳມະການຄຸ້ມຄອງ ກທຟ;
6. ຄົ້ນຄ້ວາ ແລະ ກຳນົດລາຄາຂາຍທາດໂປຕາດຊຽມຟຣູອໍໄຣ ແຕ່ລະໄລຍະເພື່ອນຳສະເໜີຄະນະກຳມະການຄຸ້ມຄອງ **ກທຟ** ພິຈາລະນາຮັບຮອງ;
7. ສັງລວມຂໍ້ມູນລາຄາຂາຍທາດໂປຕາດຊຽມຟຣູອໍໄຣ ໃນຕະຫຼາດສາກົນ ເພື່ອນຳສະເໜີຄະນະກຳມະການພິຈາລະນາໃນການຈັດຊື້ທາດໂປຕາດຊຽມຟຣູອໍໄຣໃນແຕ່ລະຄັ້ງ;
8. ວຽກງານອື່ນໆຕາມການມອບໝາຍ ຂອງຄະນະກຳມະການຄຸ້ມຄອງ ກທຟ.

# ໝວດທີ 5
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 20 ຂໍ້ຫ້າມ

ຫ້າມຄະນະກຳມະການຄຸ້ມຄອງ ແລະ ກອງເລຂາ ຂອງ ກທຟ, ກຸ່ມຜູ້ຜະລິດເກືອ ແລະ ຜູ້ຜະລິດເກືອ ມີພຶດຕິກຳດັ່ງນີ້:

1. ນຳໃຊ້ລາຍຮັບຂອງກອງທຶນໝູນວຽນທາດໄປຕາດຊຽມຟູຣອໍໄຣ ເຂົ້າໃນຈຸດປະສົງອື່ນ;
2. ຊຳລະເງິນຄ່າທາດໄປຕາດຊຽມຟຣູອໍໄຣເປັນເງິນສົດ ໂດຍບໍ່ຜ່ານທະນາຄານ ຫຼື ສະຖາບັນການເງິນຢູ່ໃນ ສປປ ລາວ;
3. ເບີກຈ່າຍທາດໄປຕາດຊຽມຟຣູອໍໄຣ ໂດຍບໍ່ຖືກຕ້ອງຕາມຂັ້ນຕອນ ແລະ ເງື່ອນໄຂການເບີກຈ່າຍຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;
4. ຈຳໜ່າຍຜະລິດຕະພັນເກືອໄອໂອດີນປະສົມຟຣູອໍໄຣ ທີ່ບໍ່ໄດ້ມາດຕະຖານຕາມລະບຽບການຂອງກະຊວງສາທາລະນະສຸກວາງອອກ;
5. ນຳໃຊ້ທາດໄປຕາດຊຽມຟຣູອໍໄຣ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ແຜນການນຳໃຊ້.

### ມາດຕາ 21 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ກຳນົດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຕາມຄວາມເໝາະສົມ.

### ມາດຕາ 22 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການໃນແຕ່ລະກໍລະນີ.

# ໝວດທີ 6

## ບົດບັນຍັດສຸດທ້າຍ

**ມາດຕາ 23 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ກຸ່ມຜູ່ຜະລິດເກືອ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ມີປະສິດທິຜົນສູງ.

**ມາດຕາ 24 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງພິມລົງຈົດໝາຍເຫດທາງລັດຖະການສິບຫ້າວັນ.

ລັດຖະມົນຕີວ່າການ

**ກະຊວງອຸດສາຫະກຳ ແລະ ການຄ້າ**

ນ. ເຂັມມະນີ ພົນເສນາ